# #ທີມເອີຣົບ ຢູ່ໃນ ສປປ ລາວ

ອີຢູ ເຮັດວຽກຮ່ວມກັນເປັນ “ທີມເອີຣົບ” ຮ່ວມກັບປະເທດສະມາຊິກທີ່ເຮັດວຽກຢູ່ໃນ ສປປ ລາວ (ຟິນແລນ, ຝຣັ່ງ, ເຢຍລະມັນ, ຮົງກາຣີ, ໄອແລນ ແລະ ລັກຊໍາເບີກ ແລະ ສະວິດເຊີແລນ). ຍຸດທະສາດການຮ່ວມມື ດັ່ງກ່າວຊ່ວຍການເຊື່ອມໂຍງວຽກງານຂອງຄູ່ຮ່ວມງານເອີຣົບ ໃຫ້ສອດຄ່ອງກັບ ຈຸດປະສົງຂອງລັດຖະບານ ເພື່ອກ້າວໄປສູ່ການບັນລຸໝາກຜົນສູງສຸດສໍາລັບປະເທດຊາດ ແລະ ປະຊາຊົນລາວ. ໃນຍຸດທະສາດຂອງທີມເອີຣົບ ສໍາລັບ ສປປ ລາວ ປີ 2021-2025, ຄາດຄະເນທຶນຊ່ວຍເຫຼືອໄວ້ຫຼາຍກວ່າ 550 ລ້ານເອີໂຣ ເຂົ້າໃສ່ການເຕີບໂຕສີຂຽວ, ການລົງທຶນໃສ່ຊັບພະຍາກອນມະນຸດ ແລະ ການປົກຄອງທີ່ດີ ໃນການສະໜັບສະໜູນ ແຜນພັດທະນາເສດຖະກິດສັງຄົມ ແຫ່ງຊາດ (NSEDP) 2021-2025. ຍຸດທະສາດນີ້ສະໜັບສະໜູນວຽກງານ “ສີຂຽວ” ເຊິ່ງໄດ້ລຽງ ລໍາດັບຄືນໃໝ່ພາຍໃຕ້ “ແຜນງານ ລິເລີ່ມສີຂຽວຂອງທີມເອີຣົບ” ໂດຍແນໃສ່ປະກອບສ່ວນເພື່ອ ການປ່ຽນແປງໃສ່ວາລະການ ເຕີບໂຕສີຂຽວຂອງ ສປປ ລາວ 2030.

## ບັນຫາທີ່ກ່ຽວພັນລຸ່ມນີ້ຈະຖືກເຊື່ອມສານເຂົ້າ:

- ສຸຂະພາບໜຶ່ງດຽວ
- ຄວາມສະເໝີພາບຍິງຊາຍ & ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ
- ຊາວໜຸ່ມ
- ການພັດທະນາຄວາມອາດສາມາດ & ສ້າງຄວາມເຂັ້ມແຂງຂອງສະຖາບັນ
- ໂພຊະນາການ
- ການເອົາໃຈໃສ່ສິດທິຂັ້ນພື້ນຖານ
- ການຫັນເປັນດີຈີຕອນ
- ສິ່ງແວດລ້ອມ, ການປ່ຽນແປງສະພາບດິນຟ້າອາກາດ, ຊີວະນາໆພັນ, ການປັບຕົວ

**Global Gateway**

ບູລິມະສິດຂອງ ສະຫະພາບ ເອີຣົບ (ອີຢູ) ຢູ່ ສປປ ລາວ ແມ່ນສ່ວນໜຶ່ງຂອງ ຍຸດທະສາດ Global Gateway ທີ່ເປັນຍຸດທະສາດໃໝ່ຂອງເອີຣົບເພື່ອຜັນຂະຫຍາຍການເຊື່ອມໂຍງຂະແໜງການດີຈີຕອນ, ພະລັງງານ ແລະ ການຂົນສົ່ງຢ່າງອັດສະຣິຍະ [ຊານສະຫຼາດ], ສະອາດ ແລະ ໝັ້ນຄົງ ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ລະບົບສາທາລະນະສຸກ, ການສຶກສາ ແລະ ການຄົ້ນຄວ້າໃນທົ່ວໂລກ. ຍຸດທະສາດ Global Gateway ແມ່ນເສັ້ນທາງເຊື່ອມຕໍ່ທີ່ຍືນຍົງ ແລະ ເຊື່ອໃຈໄດ້ສໍາລັບທຸກຄົນ ແລະ ໂລກນີ້ທີ່ຈະຊ່ວຍແກ້ໄຂສິ່ງທ້າທາຍຮີບດ່ວນທີ່ສຸດຂອງໂລກນີ້ ນັບແຕ່ການຕໍ່ສູ້ກັບ ການປ່ຽນແປງດິນຟ້າອາກາດ ຕະຫຼອດເຖິງການປັບປຸງລະບົບສາທາລະນະສຸກ ແລະ ການກະຕຸ້ນການແຂ່ງຂັນ ກໍຄືຄວາມໝັ້ນຄົງຂອງຕ່ອງໂສ້ການສະໜອງ ຂອງໂລກ.

## ການເຊື່ອມໂຍງລະຫວ່າງຂົງເຂດບູລິມະສິດ ແລະ ຂະແໜງການຫຼັກ



**ການເຊື່ອມໂຍງບູລິມະສິດສີຂຽວ:** ບູລິມະສິດ “ສີຂຽວ” ບໍ່ພຽງແຕ່ກວມເອົາຂະແໜງການກະສິກໍາ ແລະ ປ່າໄມ້/ຊີວະນາໆ ພັນເທົ່ານັ້ນ, ແຕ່ຍັງຈະສະໜັບສະໜູນການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ (ສະໜັບສະໜູນທຸລະກິດ ຂະໜາດນ້ອຍ ແລະກາງທີ່ເຮັດວຽກໃນຂົງເຂດສີຂຽວ, ການສົ່ງເສີມການ ຜະລິດແບບຍືນຍົງ), ການສຶກສາ/ການຝຶກອົບຮົມເຕັກນິກວິຊາຊີບ (TVET) (ສະໜັບສະໜູນ TVET ໃນຂົງເຂດກະສິກໍາ, ປ່າໄມ້, ການຄຸ້ມຄອງນໍ້າ ແລະ ຂົງເຂດສີຂຽວອື່ນໆ), ແລະ ການປົກຄອງທີ່ດີ (ການຈັດສັນງົບປະມານເຂົ້າໃສ່ວຽກງານສີຂຽວ).

**ການເຊື່ອມໂຍງຂອງຂະແໜງການຄ້າ ແລະ ການລົງທຶນ:** ນະໂຍບາຍບູລິມະສິດເພື່ອຮັດແໜ້ນການຮ່ວມມືໃນຂະແໜງການຄ້າ ແລະ ການລົງທຶນໃຫ້ເຂັ້ມແຂງຂຶ້ນລະຫວ່າງອີຢູ ແລະ ສປປ ລາວ ຍັງຈະໄດ້ກວມເອົາທຸກໆຂະແໜງການເປົ້າໝາຍຄື: ການອໍານວຍຄວາມສະດວກດ້ານການຄ້າ ແລະ ການດໍາເນີນທຸລະກິດໂດຍລວມ, ແລະ ໂດຍສະເພາະໃນຂະແໜງກະສິກໍາ ແລະການປຸງແຕ່ງໄມ້, ການຝຶກອົບຮົມເຕັກນິກວິຊາຊີບ (TVET), ການປົກຄອງດ້ວຍກົດໝາຍ.

ສະຫະພາບ ເອີຣົບ
European Union

ພິມເຜີຍແຜ່ໃນເດືອນ ມັງກອນ 2023 ໂດຍ ສໍານັກງານຜູ້ຕາງໜ້າສະຫະພາບເອີຣົບປະຈໍາ ສປປ ລາວ

ໜ່ວຍ 19, ຖະໜົນເສດຖາທິລາດ, ຮ່ອມ 4,
ບ້ານຫາຍໂສກ, ເມືອງຈັນທະບູລີ.
ຕູ້ ປ.ນ 9325, ນະຄອນຫຼວງວຽງຈັນ, ສປປ ລາວ
85621 255 575
delegation-laos@eeas.europa.eu
European Union in Laos

# ສະຫະພາບ ເອີຣົບ ການຮ່ວມມື ດ້ານການພັດທະນາ ຢູ່ໃນ ສປປ ລາວ

## 2021- 2027



ສະຫະພາບ ເອີຣົບ (ອີຢູ) ເປັນຄູ່ຮ່ວມງານຂອງ ສປປ ລາວມາຕັ້ງແຕ່ປີ 1997, ໂດຍສຸມໃສ່ການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມຂອງປະເທດໃຫ້ກ້າວໜ້າ, ຂະແໜງການຫຼັກທີ່ອີຢູສະໜັບສະໜູນອີຢູ ມີຄື ເສດຖະກິດສີຂຽວ ແບບມີສ່ວນຮ່ວມ, ການສຶກສາ ແລະ ການປົກຄອງທີ່ດີ. ຕັ້ງແຕ່ການຮັບຮອງສົນທິສັນຍາລິສເບີນ (Lisbon Treaty) ໃນປີ 2009, ນະໂຍບາຍການຮ່ວມມືຂອງອີຢູ ໄດ້ຫັນປ່ຽນຈາກ ການຊ່ວຍເຫຼືອແບບດັ້ງເດີມ ສູ່ ການຮ່ວມມືແບບຍຸດທະສາດ ໂດຍສຸມໃສ່ການປະຕິຮູບນະໂຍບາຍ ແລະ ການສົ່ງເສີມຄວາມເປັນເຈົ້າການຂອງລັດຖະບານ ຄຽງຄູ່ກັບການຍົກລະດັບການປະສານງານ ແລະ ຮັດແໜ້ນການຮ່ວມມືເຊິ່ງກັນແລະກັນ ຂອງຜູ້ໃຫ້ທຶນ. ອີຢູສົມທົບກັບ ຄູ່ຮ່ວມງານ ທີມເອີຣົບ ແລະ ສປປ ລາວ ເພື່ອເພີ່ມຄຸນນະພາບຂອງການຄ້າ ແລະ ການລົງທຶນຢູ່ ສປປ ລາວ ໂດຍສະເພາະ ໃນຂະແໜງເສດຖະກິດສີຂຽວທີ່ໄດ້ຮັບການສະໜັບສະໜູນໂດຍ ການຍົກລະດັບສີມືທັກສະ ແລະ ການປົກຄອງທີ່ດີຂຶ້ນ.

## ບູລິມະສິດການຮ່ວມມືຂອງ ສະຫະພາບ ເອີຣົບ ໄລຍະ 2021-2027

ຂົງເຂດບູລິມະສິດທີ 1

### ເສດຖະກິດສີຂຽວ ແບບມີສ່ວນຮ່ວມ

**ກະສິກຳ & ຕ່ອງໂສ້ອາຫານທີ່ຍືນຍົງ**

ສົ່ງເສີມ ກະສິກຳທີ່ປັດສະຈາກການຕັດໄມ້ທຳລາຍປ່າ ໂດຍການສຸມໃສ່ການພັດທະນາກະສິກຳນິເວດ ແລະ ຕ່ອງໂສ້ມູນຄ່າຜະລິດຕະພັນສະເພາະໃຫ້ມີຄຸນນະພາບສູງ ທີ່ມີທ່າແຮງສົ່ງອອກ (ເຊັ່ນ ກາເຟ ແລະ ຊາ).

**ປ່າໄມ້ ແລະ ຊີວະນາໆພັນ**

ປະກອບສ່ວນຕໍ່ການຄຸ້ມຄອງເຂດປ່າໄມ້ ແລະ ຊີວະນາໆພັນຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສລວມທັງ ອຸດສາຫະກຳປຸງແຕ່ງໄມ້ ທີ່ມີທ່າຂະຫຍາຍອັນຈະປະກອບສ່ວນໃສ່ ເສດຖະກິດສີຂຽວ,ການບໍລິການລະບົບນິເວດຢ່າງຍືນຍົງ ແລະ ສະເໝີພາບໃຫ້ແກ່ປະຊາຊົນ.

**ການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ**

ປັບປຸງສະພາບແວດລ້ອມການດຳເນີນທຸລະກິດແລະ ເພີ່ມທະວີການຄ້າ ເພື່ອກະຕຸ້ນຄວາມຍືນຍົງ ຂອງ ພາກເອກະຊົນໃຫ້ມີຄຸນນະພາບ ແລະ ຍືນຍົງ ພາຍໃຕ້ການຮ່ວມມື ລະຫວ່າງ ສປປ ລາວ ແລະ ອີຢູ ພ້ອມທັງໃນພາກພື້ນເພື່ອປະກອບສ່ວນຕໍ່ການເຊື່ອມໂຍງດ້ານເສດຖະກິດຂອງອາຊຽນ (ASEAN) ໃຫ້ເຂັ້ມແຂງກວ່າເກົ່າ. ສະຫະພາບ ເອີຣົບ (ອີຢູ) ແນໃສ່ສົ່ງເສີມການລົງທຶນຢ່າງມີຄຸນນະພາບຂອງ ບັນດາປະເທດເອີຣົບ ເຊິ່ງຄຳນຶງເຖິງການສົ່ງເສີມຄວາມຫຼາກຫຼາຍຂອງຂະແໜງການທີ່ມີທ່າແຮງ ແລະ ການສ້າງໂອກາດມີວຽກເຮັດງານທຳທີ່ເປັນທຳ.



ຂົງເຂດບູລິມະສິດທີ 2

### ຕົ້ນທຶນມະນຸດ

**ການສຶກສາ/ການຝຶກອົບຮົມເຕັກນິກວິຊາຊີບ (TVET)**

ພັດທະນາຊັບພະຍາກອນມະນຸດໃຫ້ເປັນພື້ນຖານສຳຄັນທີ່ສຸດຂອງສັງຄົມທີ່ມີຄວາມພ້ອມໃນການປັບໂຕ, ມີສ່ວນຮ່ວມ ແລະ ມີຄວາມສີວິໄລ. ຈະເນັ້ນເປັນພິເສດ ການວາງແຜນ/ການວາງງົບປະມານໃສ່ການສຶກສາ,ການຫລຸດຄວາມແຕກໂຕນລະດັບພາກພື້ນໃນການເຂົ້າເຖິງ ແລະ ຄຸນນະພາບຂອງການສຶກສາ, ການເສີມສ້າງຄວາມເຂັ້ມແຂງດ້ານສີມືທັກສະທີ່ແທດເໝາະກັບຕະຫຼາດແຮງງານ ລວມທັງ ເສດຖະກິດສີຂຽວ ແລະ ການຫັນເປັນດີຈີຕອນ.







ຂົງເຂດບູລິມະສິດທ 3

### ການປົກຄອງທີ່ດີ

**ການມີສ່ວນຮ່ວມຂອງພົນລະເມືອງ, ຄວາມຍຸດຕິທຳ/ການປົກຄອງດ້ວຍກົດໝາຍ ແລະ ສິດທິມະນຸດ**

ປະກອບສ່ວນຕໍ່ ການປົກຄອງທີ່ດີ, ຄວາມໂປ່ງໄສປັບປຸງດີຂື້ນ, ການສົ່ງເສີມການປົກຄອງດ້ວຍກົດໝາຍ ແລະ ສິດທິມະນຸດ ລວມທັງສິດທິແຮງງານ. ຂົງເຂດບູລິມະສິດນີ້ລວມທັງການປັບປຸງປະສິດທິຜົນ ແລະ ຄວາມຮັບຜິດຊອບຂອງ ການບໍລິການຂອງພາກລັດ, ການສະໜັບສະໜູນການປະຕິຮູບດ້ານການບໍລິຫານຂອງພາກລັດ, ການຕໍ່ສູ້ກັບການສໍ້ລາດບັງຫຼວງ, ການຍົກລະດັບລະບົບຍຸດຕິທຳ ພ້ອມທັງການຍົກສູງ ສະພາບແວດລ້ອມການເຄື່ອນໄຫວຂອງ ອົງການຈັດຕັ້ງສັງຄົມ ແລະ ການມີສ່ວນຮ່ວມຂອງປະຊາຊົນ.

**ການຄຸ້ມຄອງການເງິນພາກລັດ**

ການຮັດແໜ້ນການຄຸ້ມຄອງການເງິນພາກລັດໃຫ້ເຂັ້ມແຂງຂຶ້ນ ເພື່ອການເກັບລາຍຮັບພາຍໃນ ແລະ ການນຳໃຊ້ງົບປະມານຂອງລັດໃຫ້ໄດ້ຮັບໝາກຜົນສູງສຸດ ໂດຍເລັ່ງໃສ່ ການບໍລິການພົນລະເມືອງທີ່ເປັນບູລິມະສິດ ຄຽງຄູ່ກັບການແກ້ໄຂສະພາບໜີ້ສິນທີ່ສູງ ແລະ ການຟື້ນຟູສະເຖຍລະພາບຂອງເສດຖະກິດມະຫາພາກ.

### ຄາດຄະເນງົບປະມານການເງິນ ຂອງ ອີຢູ ຢູ່ໃນ ສປປ ລາວ, 2021-2024




€M = ລ້ານເອີໂຣ. ງົບປະມານທີ່ຈັດສັນເບື້ອງຕົ້ນນີ້ກວມເອົາໄລຍະປີ 2021-2024. ງົບປະມານດັ່ງກ່າວລວມທັງ ການຈັດສັນທຶນສອງຝ່າຍຂອງ ອີຢູ ມູນຄ່າ €83ລ້ານ ສຳລັບປີ 2021-2024,ງົບປະມານເພີ່ມເຕີມສຳລັບທຶນຊ່ວຍເຫຼືອລ້າ ແລະ ຈາກແຜນງານລົງທຶນພາກພື້ນໃນປີ 2020-2024 (20ລ້ານ€), ແລະ ທຽບເທົ່າມູນຄ່າການຊ່ວຍເຫຼືອທາງການ (ODA) ຈຳນວນ 50ລ້ານ€ ຂອງທຶນກູ້ຢືມທະນາຄານການລົງທຶນເອີຣົບ (EIB). ງົບປະມານທີ່ຈະຈັດສັນສຳລັບໄລຍະປີ 2025-2027 ແມ່ນຈະຖືກກຳນົດພາຍຫຼັງການທົບທວນໄລຍະກາງ ໃນປີ 2024. ໃນໄລຍະການສະໜັບສະໜູນແຜນງານ-ໂຄງການ, ສປປ ລາວຍັງຈະໄດ້ຮັບຜົນປະໂຫຍດຈາກ ທຶນເພີ່ມຕື່ມທີ່ໄດ້ມາຈາກແຜນງານ-ໂຄງການພາກພື້ນ ແລະ ສະເພາະຂະແໜງການ.

ບູລິມະສິດຂອງ ອີຢູ 2021-2027 ສະໜັບສະໜູນ 6 ຄາດໝາຍຜົນໄດ້ຮັບຂອງ NSEDP

- **ຄາດໝາຍຜົນໄດ້ຮັບ 1** ການເຕີບໂຕດ້ານເສດຖະກິດທີ່ມີຄຸນນະພາບຢ່າງຍືນຍົງ
- **ຄາດໝາຍຜົນໄດ້ຮັບ 2** ຕົ້ນທຶນມະນຸດ
- **ຄາດໝາຍຜົນໄດ້ຮັບ 3** ຊີວິດການເປັນຢູ່
- **ຄາດໝາຍຜົນໄດ້ຮັບ 4** ການປົກປັກຮັກສາສິ່ງແວດລ້ອມ
- **ຄາດໝາຍຜົນໄດ້ຮັບ 5** ການເຊື່ອມໂຍງພາກພື້ນ
- **ຄາດໝາຍຜົນໄດ້ຮັບ 6** ການປົກຄອງ

ແລະ ເປົ້າໝາຍການພັດທະນາແບບຍືນຍົງຕໍ່ໄປນີ້

